# ວິທີທີ່ເຂົາເຈົ້າແບ່ງປັນຂ່າວດີ

**ຄລິດສະຕຽນ**ໄດ້ຮັບບັນຊາໃຫ້ "ກະທຳໃຫ້ພວກຕ່າງປະເທດທັງປວງເຂົ້າເປັນລູກສິດ" ແຕ່ນັ້ນບໍ່ໄດ້ມີຄວາມຫມາຍວ່າເຂົາເຈົ້າຕ້ອງໃຊ້ວິທີທີ່ບີບບັງຄັບຫລືຝືນໃຈຄົນອື່ນໃຫ້ປ່ຽນຄວາມເຊື່ອ. ວຽກທີ່ພະເຍຊູມອບຫມາຍແມ່ນ "ປະກາດຄຳປະເສີດແກ່ຄົນທັງຫລາຍທີ່ມີໃຈອ່ອນຫວານ" ໃຫ້ "ພະຍາບານຄົນທັງຫລາຍທີ່ມີໃຈຂາດແລ້ວ" ໃຫ້ "ອອຍໃຈຂອງຄົນທັງປວງທີ່ຮ້ອງໄຫ້ໂສກເສົ້າ." (ມັດທາຍ 28:19; ເອຊາອີ 61:1, 2; ລືກາ 4:18, 19) ພະຍານພະເຢໂຫວາພະຍາຍາມເຮັດເຊັ່ນນັ້ນໂດຍການປະກາດຂ່າວດີທີ່ມາຈາກຄຳພີໄບເບິນ. ຄືກັບຜູ້ພະຍາກອນເອເຊກຽນໃນສະໄຫມບູຮານ ພະຍານພະເຢໂຫວາສະໄຫມນີ້ພະຍາຍາມສະແຫວງຫາຜູ້ທີ່ "ທອດຫຸ່ຍແລະຮ້ອງຄາງຍ້ອນການຫນ້າກຽດຫນ້າຊັງທັງປວງທີ່ເຂົາເຮັດ." —ເອເຊກຽນ 9: 4

ວິທີທີ່ເປັນທີ່ຮູ້ຈັກກັນດີເຊິ່ງເຂົາເຈົ້າໃຊ້ເພື່ອສະແຫວງຫາຜູ້ທີ່ເປັນທຸກຍ້ອນສະພາບການໃນປັດຈຸບັນແມ່ນການໄປຫາຮອດເຮືອນ. ໂດຍວິທີນີ້ ເຂົາເຈົ້າພະຍາຍາມເຂົ້າເຖິງປະຊາຊົນທົ່ວໄປຄືກັບພະເຍຊູເຄີຍເຮັດເມື່ອ "ເດີນໄປໃນເມືອງແລະບ້ານທັງຫລາຍຈຶ່ງເທສະຫນາປ່າວປະກາດແຜ່ນດິນຂອງພະເຈົ້າ ["ຂ່າວດີເລື່ອງລາຊະອານາຈັກຂອງພະເຈົ້າ," *ລ.ມ.*]." ສາວົກກຸ່ມທຳອິດຂອງພະອົງກໍເຮັດເຊັ່ນນັ້ນ. (ລືກາ 8:1; 9:1-6; 10:1-9) ໃນທຸກມື້ນີ້ ທຸກບ່ອນທີ່ສາມາດເຮັດໄດ້ ພະຍານພະເຢໂຫວາບາກບັ່ນພະຍາຍາມໄປຢາມແຕ່ລະເຮືອນປີລະຫລາຍໆເທື່ອ ເພື່ອຫາໂອກາດສົນທະນາກັບເຈົ້າຂອງບ້ານຈັກບຶດຫນຶ່ງກ່ຽວກັບເລື່ອງທີ່ຫນ້າສົນໃຈຫລືເລື່ອງທີ່ເປັນຕາຫ່ວງກັນໃນເຂດຕ່າງໆແລະໃນໂລກ. ຈະມີການພິຈາລະນາຂໍ້ຄຳພີຈັກຫນຶ່ງຫລືສອງຂໍ້ ແລະຫາກວ່າເຈົ້າຂອງບ້ານສະແດງຄວາມສົນໃຈ ພະຍານຈະກະກຽມການກັບມາຢາມຕາມເວລາທີ່ສະດວກເພື່ອສານຕໍ່ການສົນທະນາ. ຄຳພີໄບເບິນແລະສັບພະຫນັງສືທີ່ອະທິບາຍຄຳພີໄບເບິນມີຢູ່ພ້ອມສະເຫມີ ແລະຖ້າເຈົ້າຂອງບ້ານຕ້ອງການ ລາວສາມາດສຶກສາຄຳພີໄບເບິນຢູ່ທີ່ເຮືອນໂດຍບໍ່ຕ້ອງເສຍເງິນໄດ້. ມີການນຳການສຶກສາຄຳພີໄບເບິນທີ່ເປັນປະໂຫຍດແບບນີ້ກັບຫລາຍລ້ານຄົນ ເປັນລາຍບຸກຄົນແລະທັງຄອບຄົວເປັນປະຈຳທົ່ວໂລກ.

ການບອກ "ຂ່າວດີເລື່ອງລາຊະອານາຈັກ" ອີກວິທີຫນຶ່ງແມ່ນ ໂດຍທາງການປະຊຸມຕ່າງໆທີ່ຈັດຂຶ້ນຢູ່ທີ່ຫໍປະຊຸມລາຊະອານະຈັກປະຈຳທ້ອງຖິ່ນ. ພະຍານພະເຢໂຫວາຈັດການປະຊຸມຢູ່ຫັ້ນທຸກໆອາທິດ. ການປະຊຸມລາຍການຫນຶ່ງແມ່ນຄຳບັນຍາຍສາທາລະນະທີ່ມີຫົວເລື່ອງຫນ້າສົນໃຈໃນຂະນະນີ້ ຈາກນັ້ນກໍເປັນການສຶກສາທີ່ມີຫົວເລື່ອງໃດຫົວເລື່ອງຫນຶ່ງຫລືຄຳພະຍາກອນມາຈາກຄຳພີໄບເບິນ


*ຮາວາຍ*


*ເວເນຊູເອລາ*


*ຢູໂກສະລາວີ*

ໂດຍໃຊ້ວາລະສານ*ຫໍສັງເກດການ.* ການປະຊຸມອີກລາຍການໜຶ່ງແມ່ນໂຮງຮຽນຝຶກອົບຮົມພະຍານໃຫ້ເປັນຜູ້ປະກາດຂ່າວດີທີ່ຊໍານານຂຶ້ນ ຕໍ່ໄປກໍເປັນສ່ວນທີ່ຈັດໄວ້ສໍາລັບພິຈາລະນາການໃຫ້ຄໍາພະຍານໃນເຂດທ້ອງຖິ່ນ. ນອກຈາກນັ້ນ ພະຍານຍັງເຕົ້າໂຮມກັນເປັນກຸ່ມນ້ອຍໆເພື່ອສຶກສາຄໍາພີໄບເບິນໃນເຮືອນສ່ວນບຸກຄົນອາທິດລະເທື່ອ.

ການປະຊຸມທັງໝົດນີ້ເປີດໂອກາດໃຫ້ຄົນທົ່ວໄປເຂົ້າຮ່ວມນໍາ. ບໍ່ມີການແຜ່ເງິນ. ການປະຊຸມແບບນີ້ເປັນປະໂຫຍດຕໍ່ທຸກໆຄົນ. ຄໍາພີໄບເບິນບອກວ່າ "ພວກເຮົາຈົ່ງລະວັງຄຶດເຖິງກັນແລະກັນ ເພື່ອຈະໄດ້ເຕືອນໃຈກັນໃຫ້ປົງໃຈຮັກກັນແລະກັນແລະກະທໍາການດີ ຢ່າໃຫ້ປະການຊຸມນຸມກັນນັ້ນເໝືອນດັ່ງຜູ້ລາງຄົນເຄີຍປະ ແຕ່ວ່າຈົ່ງເຕືອນສະຕິກັນແລະກັນ ແລະມາກກວ່ານັ້ນອີກເພາະທ່ານທັງຫລາຍເຫັນວ່າວັນນັ້ນພວມໜຍັບເຂົ້າມາ." ການສຶກສາແລະຄົ້ນຄວ້າສ່ວນຕົວມີຄວາມຈໍາເປັນ ແຕ່ການປະຊຸມຮ່ວມກັນກັບຜູ້ອື່ນເປັນການສົ່ງເສີມກັນ ດັ່ງຄໍາສຸພາສິດທີ່ວ່າ "ເຫລັກປ່າຍເຫລັກໃຫ້ຄົມໄດ້. ແລະຄົນຜູ້ໜຶ່ງໃຫ້ໜ້າຜາກຂອງສ່ຽວແຫ່ງຕົນອຸ່ນບານໄດ້."—ເຫບເລີ 10:24, 25; ສຸພາສິດ 27:17.

ນອກຈາກນັ້ນ ພະຍານຍັງຫາໂອກາດເພື່ອເວົ້າເລື່ອງຂ່າວດີເມື່ອມີການຕິດຕໍ່ພົວພັນກັບຄົນອື່ນໃນຊີວິດປະຈໍາວັນນໍາອີກ. ອາດຈະເຮັດໄດ້ໂດຍລົມກັນກັບເພື່ອນບ້ານຈັກສອງສາມຄໍາຫລືກັບຜູ້ຮ່ວມລົດໂດຍສານຫລືກັບຜູ້ທີ່ຂຶ້ນຍົນລໍາດຽວກັນ ການສົນທະນາຈະດີນກວ່າເມື່ອເວົ້າກັບໝູ່ຫລືຍາດພີ່ນ້ອງ ຫລືເວົ້າກັບເພື່ອນທີ່ເຮັດວຽກນໍາກັນລະຫວ່າງກິນເຂົ້າສວາຍ. ເມື່ອພະເຍຊູຢູ່ເທິງໂລກນີ້ການໃຫ້ຄໍາພະຍານສ່ວນຫລາຍແມ່ນຕອນທີ່ພະອົງຍ່າງຕາມແຄມທະເລ, ນັ່ງຢູ່ເນີນພູ, ກິນເຂົ້ານໍາຄົນອື່ນ, ໃນງານດອງ ຫລືເດີນທາງໄປກັບເຮືອຫາປາຢູ່ທະເລຄາລີເລ. ພະອົງສອນຢູ່ໂຮງທໍາແລະທີ່ວິຫານໃນເມືອງເຢຣູຊາເລມ. ບໍ່ວ່າພະອົງຢູ່ບ່ອນໃດ ພະອົງກໍຫາໂອກາດເວົ້າເລື່ອງລາຊະອານາຈັກຂອງພະເຈົ້າ. ພະຍານພະເຢໂຫວາພະຍາຍາມຕິດຕາມຕົວຢ່າງຂອງພະເຍຊູໃນເລື່ອງນີ້ຄືກັນ.—1 ເປໂຕ 2:21.



*ຫໍປະຊຸມລາຊະອານາຈັກທີ່ມີການອອກແບບຢ່າງເໝາະສົມໃຫ້ເປັນສະຖານທີ່ສໍາລັບການພິຈາລະນາຄໍາພີໄບເບິນ*



## ການປະກາດໂດຍທາງຕົວຢ່າງ

ການບອກຂ່າວດີດ້ວຍວິທີເຫລົ່ານີ້ຈະບໍ່ມີຄວາມຫມາຍຕໍ່ຄົນອື່ນເລີຍ ຫາກວ່າຜູ້ທີ່ບອກຂ່າວດີແກ່ຄົນອື່ນບໍ່ປະຕິບັດຕາມສິ່ງທີ່ຕົວເອງສອນ. ການເວົ້າຢ່າງຫນຶ່ງແຕ່ເຮັດອີກຢ່າງຫນຶ່ງນັ້ນເປັນການຫນ້າຊື່ໃຈຄົດ ແລະຄວາມຫນ້າຊື່ໃຈຄົດທາງສາສະຫນາໄດ້ເຮັດໃຫ້ຫລາຍລ້ານຄົນບໍ່ສົນໃຈໃນຄຳພີໄບເບິນ. ບໍ່ຄວນໂທດຄຳພີໄບເບິນ. ພວກສະຫມຽນແລະຟາລີຊຽນມີພະຄຳພີພາກພາສາເຫບເລີ ແຕ່ພະເຍຊູປະນາມເຂົາເຈົ້າວ່າເປັນພວກຫນ້າຊື່ໃຈຄົດ. ພະອົງເວົ້າເຖິງບັນຍັດຂອງໂມເຊທີ່ເຂົາເຈົ້າອ່ານໃຫ້ປະຊາຊົນຟັງ ແລ້ວພະອົງຈຶ່ງກ່າວກັບສາວົກຕໍ່ອີກວ່າ "ສັບພະທຸກສິ່ງທີ່ເຂົາຈະສັ່ງທ່ານທັງຫລາຍໃຫ້ກະທຳ ຈົ່ງກະທຳແລະຮັບຕາມເຖີ້ນ ແຕ່ວ່າຢ່າໄດ້ກະທຳຕາມກິດຈະການຂອງເຂົາເພາະເຂົາສັ່ງແລະບໍ່ຮັບຕາມ." (ມັດທາຍ 23:3) ຕົວຢ່າງໃນການດຳເນີນຊີວິດທີ່ຖືກຕ້ອງຂອງຄລິດສະຕຽນເປັນຕາເຊື່ອຖືຫລາຍກວ່າການເທດຕັ້ງຫລາຍຊົ່ວໂມງ. ມີການແນະນຳໃຫ້ເມຍຄລິດສະຕຽນເຊິ່ງມີຜົວທີ່ບໍ່ໄດ້ເປັນຜູ້ເຊື່ອຖືວ່າ "ກິດຈະການແຫ່ງເມຍຈະໄດ້ເອົາໃຈຜົວໄດ້ປາສະຈາກພະຄຳ ເມື່ອຜົວຈະໄດ້ຈອບເຫັນເມຍໄດ້ກະທຳຕາມທຳນຽມອັນບໍລິສຸດດ້ວຍໃຈຢ້ານຢຳ."—1 ເປໂຕ 3:1, 2.

ດ້ວຍເຫດນີ້ ພະຍານພະເຢໂຫວາຈຶ່ງພະຍາຍາມແນະນຳຂ່າວດີແກ່ຄົນອື່ນດ້ວຍວິທີນີ້ຄືກັນ ກໍໂດຍການເປັນຕົວຢ່າງໃນເລື່ອງການປະພຶດແບບຄລິດສະຕຽນທີ່ເຂົາເຈົ້າແນະນຳໃຫ້ແກ່ຄົນອື່ນໆ. ເມື່ອຢາກໃຫ້ຄົນອື່ນກະທຳສິ່ງໃດກັບຕົນ ເຂົາເຈົ້າຈຶ່ງພະຍາຍາມ "ກະທຳສິ່ງນັ້ນສຳລັບເຂົາທຸກປະການເຫມືອນກັນດ້ວຍ." (ມັດທາຍ 7:12) ເຂົາເຈົ້າພະຍາຍາມເຮັດແນວນີ້ຕໍ່ທຸກຄົນ ບໍ່ແມ່ນກັບແຕ່ເພື່ອນພະຍານ, ກັບຫມູ່, ກັບເພື່ອນບ້ານ, ຫລືຍາດພີ່ນ້ອງເທົ່ານັ້ນ. ເນື່ອງຈາກເປັນມະນຸດທີ່ບໍ່ສົມບູນແບບ ເຂົາເຈົ້າຈຶ່ງມີຂໍ້ຂາດຕົກບົກພ່ອງຢູ່ແດ່. ແຕ່ເຂົາເຈົ້າມີຄວາມປາຖະຫນາໃນໃຈຢູ່ແລ້ວທີ່ຈະເຮັດດີຕໍ່ທຸກຄົນ ບໍ່ພຽງໄດ້ແຕ່ບອກຂ່າວດີເລື່ອງລາຊະອານາຈັກ ແຕ່ຍັງໃຫ້ຄວາມຊ່ວຍເຫລືອເມື່ອໃດກໍໄດ້ທີ່ເຂົາເຈົ້າເຮັດໄດ້.—ຢາໂກໂບ 2:14-17.



*ທັງໃນຊີວິດຄອບຄົວແລະຕອນທີ່ຕິດຕໍ່ກັບຄົນອື່ນ ດ້ວຍຄວາມຈິງໃຈພະຍານພະຍາຍາມເຮັດສິ່ງທີ່ເຂົາເຈົ້າສອນຄົນອື່ນ*



